**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ ພຶສພາ-06, 2007 ( 05-06-2007 )**

---

## ຖວາຍກຽດແດ່ພຣະເຈົ້າ:

**ຂໍ້ພຣະຄັມພີໃນບົດຮຽນ:** ຟີລິບປອຍ 2:1-8;4:2-9

**ຄໍາຖາມແຫ່ງຊີວິດ:** ຂ້າພະເຈົ້າຈະເຮັດໃຫ້ພຣະເຈົ້າພໍພຣະທັຍ ແລະຖວາຍກຽດແດ່ພຣະເຈົ້າໃນເມື່ອມີເຫດການຄວາມຂັດແຍ້ງກັນໄດ້ຢ່າງໃດ?

**ຄວາມຈິງໃນພຣະຄັມພີ:** ການທີ່ບໍ່ຖືກຕ້ອງປອງດອງກັນກໍນໍາໂອກາດໃນການທີ່ຈະເຮັດໃຫ້ພໍພຣະທັຍແລະຖວາຍກຽດແດ່ພຣະເຈົ້າ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍເຫລືອທ່ານໃຫ້ເປັນຜູ້ສ້າງຄວາມສງົບສຸກທີ່ແທ້ຈິງແລະແກ້ໄຂບັນຫາຂໍ້ຂັດແຍ້ງສ່ວນຕົວຂອງແຕ່ລະຄົນໂດຍ:

- ການຕັດສິນໃຈໃນການທີ່ຈະໃຫ້ພໍພຣະທັຍ ແລະຖວາຍກຽດແດ່ພຣະເຈົ້າໃນກໍລະນີທີ່ຂັດແຍ້ງກັນ ແລະ
- ການສັງເກດຮູ້ເຖິງການທີ່ທ່ານຈະເຮັດໃຫ້ພໍພຣະທັຍ ແລະຖວາຍກຽດແດ່ພຣະເຈົ້າໃນກໍລະນີທີ່ມີການຂັດແຍເງກັນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ.

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ທີ່ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ.
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

## ບົດນໍາ:

1. ຂຽນ "ການ ເປັນຜູ້ສ້າງສັນຕິສຸກ" "ການໃຫ້ກຽດແດ່ພຣະເຈົ້າ " ໃສ່ກະດານ.
2. ຕໍ່ຄອບຄົວ, ຕໍ່ເພື່ອນບ້ານ ແລະຕໍ່ຄຣິສຕະຈັກກໍເໝືອນກັນ.

## 1. ລອກແບບຈາກພຣະຄຣິດ: ( ຟີລິບປອຍ 2:1-8)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ຟີລິບປອຍ 2:1-8

2) **ຄໍາຖາມ:** ກ. ແມ່ນຫຍັງທີ່ຈະເຮັດໃຫ້ທ່ານໂປໂລມີຄວາມຊົມຊື່ນຍິນດີຕໍ່ຄວາມສໍາເຣັດຜົນ?

ຂ. ໃນອາທິດນີ້ ແມ່ນຫຍັງທີ່ທ່ານຕ້ອງການເອົາມາເປັນຈຸດເປົ້າໝາຍທີ່ຈະເຮັດໃຫ້ເໝືອນພຣະເຢຊູຄຣິດ?

ຄ. ກິຈການງານຂອງພຣະເຢຊູຄຣິດກັບຂອງພຣະບິດາມີຕໍາແໜ່ງສູງກວ່າກັນບໍ່?

3) **ອະທິບາຍ:** ພຣະເຢຊູຄຣິດບໍ່ໄດ້ເຮັດກິຈການງານທີ່ສູງກວ່າມະນຸດ, ພຣະອົງຊົງຖ່ອມພຣະອົງເອງລົງມາຮັບສະພາບມະນຸດ ມາເປັນແບບຢ່າງແກ່ມະນຸດ ເພື່ອມະນຸດຈະໄດ້ເຮັດເໝືອນພຣະອົງ.

**ຄໍາຖາມ:** ໃນຂໍ້ທີ 8 ນັ້ນ ພວກເຮົາຮູ້ໄດ້ຢ່າງໃດວ່າ ພຣະເຢຊູບໍ່ເຫັນແກ່ປໂຍດສ່ວນຕົວ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ຟີລິບປອຍ 2:1-8

1) ໃນຜູ້ທີ່ເຊື່ອທັງຫລາຍຮູ້ວ່າເຂົາເຈົ້າໄດ້ລອກແບບຈາກພຣະຄຣິດ ແລະຖວາຍກຽດແດ່ພຣະເຈົ້າດ້ວຍການຝຶກຝົນຢູ່ ແຕ່ເປັນຫຍັງສິ່ງເຫລົ່ານີ້ຍັງບໍ່ປາກົດຂຶ້ນເທື່ອ?

2) ຂໍ້ຄວນພິຈາຣະນາ 3 ຢ່າງຂອງການຖ່ອມຕົວຂອງພຣະເຢຊູຕໍ່ (ກິຈການງານ, ມະນຸດ ແລະ ຈຸດປະສົງ ) ອັນໃດທີ່ຍາກທີ່ສຸດສໍາລັບທ່ານທີ່ຈະເຮັດ? ເປັນດ້ວຍເຫດໃດ?

3) ຜົນດີອັນໃດທີ່ທ່ານຈະໄດ້ຮັບຖ້າທ່ານຫາກຖ່ອມຕົວ?

## 2. ເຫັນດີເຫັນພ້ອມໃນພຣະຜູ້ເປັນເຈົ້າ: ( ຟີລິບປອຍ 4:2-3

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ຟີລິບປອຍ 4:2-3

2) **ຄໍາຖາມ:** ນາງຢູໂອເດັຽ ແລະນາງ ຊຶນຕີເຂ ເຫັນດີເຫັນພ້ອມໃນອົງພຣະຜູ້ເປັນເຈົ້າໄດ້ຢ່າງໃດ?

3) ແມ່ນຫຍັງທີ່ໄດ້ສະແດງອອກໃຫ້ພວກເຮົາເຫັນເຖິງສະຖານະການຂອງຄວາມຂັດແຍ້ງໃນມື້ນີ້?

4) **ອະທິບາຍ:** ສິ່ງທີ່ສໍາຄັນທີ່ເຮັດໃຫ້ທ່ານ ໂປໂລມີຄວາມຊົມຊື່ນຍິນດີປະການນຶ່ງນັ້ນກໍຄື: ນາງຢູໂອເດັຽ ກັບນາງຊຶນຕີເຂ ເຫັນດີເຫັນພ້ອມໃນອົງພຣະຜູ້ເປັນເຈົ້າ.

**ຄໍາຖາມ:** ສະມາຊິກໃນຄຣິສຕະຈັກຄວນຈົດຈໍາສິ່ງໃດຕາມຂໍ້ທີ 3 ທີ່ໄດ້ກ່າວໄວ້ນັ້ນ?

**ອະທິບາຍ:** ໃນບົດຮຽນນີ້ຈະຊ່ອຍທ່ານໃຫ້ຮູ້ຈັກວ່າ ເຮັດຢ່າງໃດຈະສາມາດຖວາຍກຽດແດ່ພຣະເຈົ້າໄດ້ ໃນເມື່ອປະເຊີນກັບການຂັດແຍ້ງ.

- ການຂັດແຍ້ງໄດ້ຕໍ່ສູ້ບໍ່ໃຫ້ຜູ້ທີ່ເຊື່ອ (ຄຣິສຕຽນ) ຖວາຍກຽດແດ່ພຣະເຈົ້າ. ບໍ່ສະເພາະແຕ່ເທົ່ານັ້ນການຂັດແຍ້ງຍັງໄດ້ຂັດຂວາງຜົນປໂຍດຂອງການຊ່ອຍເຫລືອຊຶ່ງກັນແລະກັນອີກດ້ວຍ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ຟີລິບປອຍ 4:2-3

1. ເປັນຫຍັງທ່ານໂປໂລຈຶ່ງໝູນໃຈໃຫ້ຈົດຈໍ່ ສຸມຈິດສຸມໃຈໃສ່ການຜູກພັນໃນພຣະເຢຊູຄຣິດ?
2. ຂໍ້ຄວາມທີ່ສໍາຄັນການຖວາຍກຽດແດ່ພຣະເຈົ້ານີ້ຄົນທີ່ບໍ່ເຊື່ອກໍນໍາເອົາໄປໃຊ້ບໍ່?
3. ອັນໃດທີ່ຜູ້ທີ່ເຊື່ອຄວນໄຈ້ແຍກສໍາລັບການໃຫ້ກຽດແດ່ພຣະເຈົ້າກັບການໃຫ້ກຽດແກ່ກັນແລະກັນ ຫລືແກ່ຜູ້ທີ່ບໍ່ເຊື່ອ?

## 3. ໄວ້ວາງໃຈໃນພຣະຜູ້ເປັນເຈົ້າ: ( ຟີລິບປອຍ 4:4-7)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ຟີລິບປອຍ 4:4-7

2) **ຄໍາຖາມ:** ທ່ານໄດ້ເຊື່ອໄວ້ວາງໃຈຢ່າງແທ້ຈິງບໍ່?

3) **ອະທິບາຍ:** -ຄວາມເຊື່ອໄວ້ວາງໃຈໄດ້ສ້າງໃຫ້ເກີດຄວາມຄິດຮັບຜິດຊອບໃຫ້ສົມບູນແບບ;

- ຊຶ່ງຊີ້ໃຫ້ເຫັນເຖິງຄວາມສງົບສຸກໃນພຣະເຈົ້າ (ຂໍ້ 7) ອ້າງເຖິງຄວາມສົມບູນພາຍໃຕ້ກົດຂອງພຣະເຈົ້າເຊັ່ນ: ຄວາມສົມບູນປະກອບສຸຂພາບດີຄວາມສັມພັນດີ

- ພຣະພອນບັ້ນປາຍແມ່ນຫຍັງ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ຟີລິບປອຍ 4:4-7

1. ແມ່ນຫຍັງເປັນໝາກຜົນຂອງການອະທິຖານ?
2. ໃນເມື່ອຈິດໃຈກັງວົນສິນເຫຼື້ອມາມັນສະແດງອອກໃຫ້ເຫັນຢ່າງໃດ?
3. ຄວາມສັມພັນທີ່ດີກັບພຣະເຈົ້າໄດ້ເຮັດໃຫ້ພວກເຮົາມີຄວາມສງົບສຸກແນວໃດ?

## 4. <u>ຕິດຕາມສິ່ງທີ່ດີທີ່ສຸດ:</u> ຟີລິບປອຍ 4:8,9

1) ຂໍໃຫ້ນັກຮຽນອາສາສມັກອ່ານ ຟີລິບປອຍ 4:8,9

2) **ອະທິບາຍ:** ຜູ້ທີ່ເຊື່ອມັກຈະມົວເມົາຢູ່ນຳແຕ່ສິ່ງຂອງຢ່າງອື່ນ. ( ໃຫ້ຍົກຕົວຢ່າງຂື້ນມາ)

**ຄຳຖາມເພື່ອແລກປ່ຽນຄວາມຄິດຄວາມເຫັນ:**

1. ແມ່ນຫຍັງທີ່ທ່ານໂປໂລ ໃຫ້ຄຣິສຕຽນຟີລິບປອຍເຮັດ ( ໃນຂໍ້ 9 )
2. ມີຫຍັງທີ່ກ່ຽວຂ້ອງພົວພັນກັບພຣະເຈົ້າໃນເຫດການ ການຂັດແຍ້ງ?

**<u>ສລູບ</u>:**

<u>ຈົດຈໍ່ຢູ່ໃນບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ຜູ້ທີ່ເຊື່ອຕ້ອງໃຫ້ກຽດແດ່ພຣະເຈົ້າໃນການແກ້ໄຂການຂັດແຍ້ງ ໂດການຮຽນແບບຂອງພຣະເຢຊູ.
- ຜູ້ທີ່ເຊື່ອຕ້ອງສ້າງຕັ້ງຮາກຖານຖາວອນທີ່ມີຊີວິດອັນໝຽວແໜ້ນໃຫ້ເຫັນດີເຫັນພ້ອມໃນພຣະເຈົ້າ.
- ຜູ້ທີ່ເຊື່ອຕ້ອງໄວ້ວາງໃຈໃນພຣະເຈົ້າເພື່ອຕໍ່ສູ້ກັບການຂັດແຍ້ງ.
- ຜູ້ທີ່ເຊື່ອຕ້ອງມີປະສົບການກັບສັນຕິສຸກຂອງພຣະເຈົ້າໂດຍການຕິດຕາມສິ່ງທີ່ດີທີ່ສຸດ.

- ອະທິຖານປິດຫ້ອງຮຽນດ້ວຍການຂໍໃຫ້ພຣະເຈົ້ານຳພາຫົວໃຈຂອງພວກເຮົາໃຫ້ຖວາຍກຽດແດ່ພຣະເຈົ້າ ລອກແບບການຖ່ອມຕົວຕໍ່ພຣະເຢຊູ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ. www.lsbf.org. by JH